# ກອງທຶນຫລຸດຜ່ອນຄວາມທຸກຍາກ
# ໜ້າທີ່ຮັບຜິດຊອບ

| | |
|---|---|
| ຕຳແໜ່ງ : | ບໍລິຫານການເງິນຂັ້ນເມືອງ |
| ຈຳນວນຕຳແໜ່ງ: | ຫ້ອງການລະ 1 ຄົນ |
| ລາຍງານໂດຍກົງຫາ: | ຫົວໜ້າທີມຂັ້ນເມືອງ, ບໍລິຫານການເງິນຂັ້ນແຂວງ |
| ພົວພັນວຽກໃກ້ຊິດກັບ: | ທີມງານ ທລຍ ເມືອງ, ບໍລິຫານການເງິນແຂວງ |
| ໜ້າທີ່ຮັບຜິດຊອບທົ່ວໄປ: | ໃຫ້ຄຳແນະນຳ ແລະ ຊ່ວຍເຫລືອທີມງານກຸ່ມບ້ານ ໃນການຄຸ້ມຄອງ ການເບີກຈ່າຍງົບປະມານໂຄງການຍ່ອຍ |
| ບ່ອນປະຈຳການ: | ຫ້ອງການ ທລຍ ເມືອງ ຢູ່ແຕ່ລະເມືອງເປົ້າໝາຍ ເດີນທາງໄປປະຕິບັດວຽກຢູ່ກຸ່ມບ້ານ ແລະ ບ້ານ ຕາມການມອບໝາຍຂອງການຈັດຕັ້ງ |
| ປະເພດສັນຍາ: | ເປັນລາຍປີ ໂດຍອີງຕາມຜົນການປະຕິບັດວຽກຕົວຈິງ ໃນແຕ່ລະໄລຍະ ມີໄລຍະທົດສອບວຽກ 3-6 ເດືອນ ໃນເວລາເຂົ້າເຮັດວຽກໃໝ່. |

**ໜ້າທີ່ ແລະ ຄວາມຮັບຜິດຊອບຫລັກ:**

- ຄຸ້ມຄອງ, ຕິດຕາມແລະກວດກາ ຊັບສົມບັດຄົງທີ່ຂອງຫ້ອງການ
- ກະກຽມ ຫລື ປະກອບເອກະສານສະເໜີຂໍງົບປະມານ ສົ່ງຫາຂັ້ນແຂວງ
- ໃຫ້ຄຳແນະນຳ ແລະ ຝຶກອົບຮົມກຸ່ມບ້ານ ກ່ຽວກັບວິທີຄຸ້ມຄອງບໍລິຫານການເບີກຈ່າຍງົບປະມານຂອງໂຄງການຍ່ອຍ
- ກວດກາ ແລະ ຢັ້ງຢືນຄວາມຖືກຕ້ອງຂອງບົດສະຫລຸບ/ລາຍງານການເບີກຈ່າຍງົບປະມານໂຄງການຍ່ອຍທີ່ກຸ່ມບ້ານໄດ້ກະກຽມ ແລະ ສົ່ງໃຫ້
- ກະກຽມບົດລາຍງານການເງິນປະຈຳເດືອນ ແລະ ສົ່ງຫາບໍລິຫານການເງິນຂັ້ນແຂວງ ໃຫ້ທັນຕາມກຳນົດເວລາ
- ຕິດຕາມ ແລະ ຮັກສາທຸກໆເອກະສານທາງດ້ານການເງິນ ແລະ ຈັດຊື້ ຈັດຈ້າງໃຫ້ເປັນລະບົບ
- ຊ່ວຍເຫລືອທີມງານກຸ່ມບ້ານ ໃນການກະກຽມເອກະສານວຽກງານຈັດຊື້ຈັດຈ້າງ, ການດຳເນີນຂັ້ນຕອນ ການຈັດຊື້ຈັດຈ້າງ ແລະ ເຂົ້າຮ່ວມໃນຂະບວນການດຳເນີນວຽກງານຈັດຊື້ຈັດຈ້າງ ໂດຍສະເພາະແມ່ນການຈັດຊື້ຈັດຈ້າງໂຄງການຍ່ອຍ
- ໃຫ້ຄຳແນະນຳແລະ ຊ່ວຍເຫລືອ ທີມງານກຸ່ມບ້ານ ໃນການຈັດຕັ້ງປະຕິບັດວຽກງານຈັດຊື້ຈັດຈ້າງໃຫ້ຖືກຕ້ອງແລະສອດຄ່ອງກັບລະບຽບຫລັກການການຈັດຊື້ຈັດຈ້າງ ທລຍ
- ປະຕິບັດໜ້າວຽກອື່ນໆ ຕາມຄວາມຮຽກຮ້ອງຕ້ອງການ ແລະ ການມອບໝາຍຂອງການຈັດຕັ້ງ

**ຄຸນວຸດທິ ແລະ ປະສົບການ:**

- ຮຽນຈົບການເງິນ/ບັນຊີ, ບໍລິຫານທຸລະກິດ ຫລື ຂະແໜງການອື່ນໆທີ່ກ່ຽວຂ້ອງ
- ມີປະສົບການເຮັດວຽກກ່ຽວກັບການຄຸ້ມຄອງບໍລິຫານ-ການເງິນ, ບັນຊີໂຄງການ ຫລື ວຽກຈັດຊື້ຈັດຈ້າງ ຢ່າງໜ້ອຍ 02 ປີ
- ມີປະສົບການເຮັດວຽກກັບຊຸມຊົນ ຫລື ໂຄງການພັດທະນາຊົນນະບົດ
- ຄຸ້ຍເຄີຍ ຫລື ມີຄວາມຮູ້ກ່ຽວກັບລະບົບການຈັດຕັ້ງປະຕິບັດວຽກຂອງໂຄງການ ທີ່ໄດ້ຮັບການຊ່ວຍເຫລືອຈາກທະນາຄານໂລກ ຫລື ໂຄງການສາກົນອື່ນ ຍິ່ງເປັນການດີ
- ມີປະສົບການວນການເປັນຄູຝຶກ ໃຫ້ຜູ້ອື່ນໆ ຫລືຊຸມຊົນ
- ສາມາດນຳໃຊ້ຄອມພິວເຕີໄດ້ດີ ເປັນຕົ້ນແມ່ນ MS. Word and MS Excel ແລະ ອື່ນໆ
- ສາມາເດີນທາງໄປເຮັດວຽກຢູ່ເຂດຫ່າງໄກສອກຫລີກ